Regular School Attendance

# ການມາໂຮງຮຽນສມ່ຳສເມີ

## ຂໍ້ມູນສຳລັບບັນດາພໍ່ແມ່ ແລະ ຜູ້ປົກຄອງ







**ທ່ານເຄີຍຮູ້ບໍ່? ຖ້າພວກນັກຮຽນຂາດໂຮງຮຽນເຖິງຈະໜ້ອຍພຽງແຕ່ແປດມື້ໃນເທີມນຶ່ງກໍຕາມ ເພື່ອເຖິງເວລາຈົບຂັ້ນປະຖົມສຶກສາ ພວກເຂົາກໍຈະຂາດເປັນເວລານຶ່ງປີຂອງການສຶກສາ.**

## ເປັນຫຍັງຂ້າພະເຈົ້າຕ້ອງສົ່ງລູກໄປໂຮງຮຽນ?

ການສຶກສາຢູ່ໃນຣັດ ນີວເຊົາທ໌ເວລສ໌ເປັນສິ່ງບັງຄັບ. ອັນນີ້ໝາຍຄວາມວ່າ ເດັກທຸກຄົນທີ່ມີອາຍຸແຕ່ຫົກປີ ແລະຜູ້ມີ ອາຍຸຕ່ຳກວ່າອາຍຸຕ່ຳສຸດຂອງການອອກໂຮງຮຽນ ຕ້ອງເຂົ້າ ໂຮງຮຽນຕາມກົດໝາຍບັງຄັບ.

ນັບຈາກປີ 2010 ເປັນຕົ້ນໄປ ນັກຮຽນໝົດທຸກຄົນໃນຣັດ ນີວເຊົາທ໌ເວລສ໌ຕ້ອງຮຽນໃຫ້ຈົບ Year 10. ຫຼັງຈາກ Year 10 ແລະຈົນກວ່າພວກເຂົາຈະມີອາຍຸຄົບ 17ປີ ບັນດານັກຮຽນ ຕ້ອງ:

1. ຮຽນໜັງສືຢູ່ໃນໂຮງຮຽນ ຫຼື ຈົດຊື່ຮຽນຢູ່ເຮືອນ ຫຼື
2. ຢູ່ໃນການສຶກສາທີ່ມີການຮັບຮູ້ ຫຼື ການຝຶກຫັດ (ເຊັ່ນ ຢູ່ TAFE, ການເປັນຜູ້ຝຶກຫັດ, ການຮຽນຝຶກເຮັດວຽກ) ຫຼື
3. ເຮັດວຽກເຕັມເວລາແລະໄດ້ເງິນເດືອນ (25 ຊົ່ວໂມງຕໍ່ອາທິດໂດຍສເລັ່ຍ) ຫຼື ທັງຮຽນແລະເຮັດວຽກ/ຝຶກຫັດ ປະສົມກັນ.

ຕາມກົດໝາຍແລ້ວ ບັນດາທ່ານຄູໃຫຍ່ເປັນຜູ້ຮັບຜິດຊອບໃນການເກັບ ບັນທຶກການມາໂຮງຮຽນຂອງນັກຮຽນໃຫ້ຖືກຕ້ອງ.

ນອກຈາກນີ້ແລ້ວ ບັນດາທ່ານຄູໃຫຍ່ຍັງເປັນຜູ້ຮັບຜິດຊອບໃນການຕັດສິນໃຈວ່າເຫດຜົນຂອງການຂາດໂຮງຮຽນທີ່ໃຫ້ນັ້ນຖືກຕ້ອງເໝາະສົມຫຼືບໍ່.

ດ້ວຍເຫດຜົນດັ່ງກ່າວນີ້ ບັນດາທ່ານຄູໃຫຍ່ອາດຈະຂໍໃຫ້ມີໜັງສືຢັ້ງຢືນຈາກນາຍໝໍ ຫຼື ໜັງສືອື່ນໆສຳລັບການຂາດໂຮງຮຽນເປັນເວລາດົນ ຫຼື ຂາດເລື້ອຍໆ ແລະໃຫ້ພໍ່ແມ່ ອະທິບາຍ ວ່າເປັນຍ້ອນການເຈັບປ່ວຍ.

ຖ້າບັນດາທ່ານຄູໃຫຍ່ພິຈາຣະນາວ່າຄຳອະທິບາຍນັ້ນບໍ່ເປັນທີ່ໜ້າພໍໃຈ ພວກເພິ່ນກໍຈະລົງບັນທຶກການຂາດໂຮງຮຽນນັ້ນວ່າເປັນການຂາດທີ່ບໍ່ມີເຫດຜົນ.

ມັນເປັນສິ່ງສຳຄັນທີ່ຕ້ອງເຂົ້າໃຈວ່າ New South Wales Department of Education and Training ອາດຈະດຳເນີນການຕາມກົດໝາຍຕໍ່ບັນດາພໍ່ແມ່ (ຮວມທັງຜູ້ປົກຄອງ) ຖ້າ ຫາກບັນດາເດັກທີ່ມີອາຍຸເຂົ້າໂຮງຮຽນມີການຂາດໂຮງຮຽນໂດຍບໍ່ມີເຫດຜົນຫຼາຍເທື່ອ.

## ຂ້າພະເຈົ້າຕ້ອງສົ່ງລູກໄປໂຮງຮຽນທຸກໆມື້ບໍ?

**ແມ່ນແລ້ວ**. ມັນເປັນເງື່ອນໄຂຂອງການຈົດຊື່ເຂົ້າໂຮງຮຽນ ວ່າທ່ານຕ້ອງສົ່ງລູກທ່ານໄປໂຮງຮຽນທຸກໆມື້.

ການຂາດໂຮງຮຽນຈຳນວນໜ້ອຍອາດຖືວ່າເປັນທີ່ໜ້າພໍໃຈຖ້າລູກທ່ານ:

- ຕ້ອງໄປຮ່ວມພິທີທາງສາສນາເປັນພິເສດ
- ຕ້ອງໄປຮ່ວມໃນສະພາບການທີ່ຮ້າຍແຮງ ຫຼື ສຸກເສີນຂອງ ຄອບຄົວ (ເຊັ່ນ ການສົ່ງສະການ)
- ໄຂ້ໜັກ ຫຼື ມີພະຍາດຕິດຕໍ່ຈົນໄປໂຮງຮຽນບໍ່ໄດ້

ການມີເຫົາຖືວ່າເປັນເລື້ອງທັມມະດາ ໂດຍສະເພາະຢູ່ໃນໂຮງຮຽນປະຖົມທົ່ວໄປ. ບັນດາພໍ່ແມ່ຄວນກວດເບິ່ງຜົມຂອງພວກລູກໆໃຫ້ສມ່ຳສເມີວ່າມີເຫົາບໍ່ ແລະຈົ່ງທຳການຮັກສາຖ້າ ຫາກວ່າໄດ້ເຫັນໄຂ່ເຫົາ.

ທ່ານສາມາດຊອກຫາຂໍ້ມູນກ່ຽວກັບເຫົາແລະການຮັກສາທີ່ແປ ເປັນພາສາຕ່າງໆໄດ້ ທີ່:

https://www.det.nsw.edu.au/languagesupport/documents/headlice/infosheet.htm

ຄຳແນະນຳຈາກກະຊວງ ສາທາຣະນະສຸກ ແຫ່ງຣັດ ນີວເຊົາທ໌ ເວລສ໌ ບົ່ງບອກວ່າ ບໍ່ຈຳເປັນຕ້ອງສົ່ງບັນດານັກຮຽນກັບເມືອເຮືອນ ຫຼື ບໍ່ໃຫ້ໄປໂຮງຮຽນຍ້ອນວ່າມີເຫົາ. ເຫົາບໍ່ແມ່ນເຫດຜົນທີ່ໃຊ້ໄດ້ສຳລັບການຂາດໂຮງຮຽນດົນ.

## ເປັນຫຍັງການມາໂຮງຮຽນສມ່ຳສເມີຈຶ່ງເປັນສິ່ງສຳຄັນ?

ການມາໂຮງຮຽນສມ່ຳສເມີຈະຊ່ວຍໃຫ້ລູກທ່ານມີຄວາມສຳເຣັດໃນອະນາຄົດ.

ການມາໂຮງຮຽນທຸກໆມື້ເຮັດໃຫ້ການຮຽນງ່າຍຂຶ້ນສຳລັບລູກ ທ່ານ ແລະ ຈະຊ່ວຍໃຫ້ບັນດາເດັກນ້ອຍສ້າງແລະຮັກສາໄວ້ຊຶ່ງມິດພາບກັບເດັກອື່ນໆ.

ຖ້າລູກທ່ານບໍ່ຮຽນຮູ້ທັກສະພື້ນຖານໃນປີຕົ້ນໆຂອງການຮຽນ ພວກເຂົາກໍອາດມີບັນຫາໃນການຮຽນໃນປີຕໍ່ໆມາ.

NEW SOUTH WALES DEPARTMENT OF EDUCATION AND TRAINING

## ເປັນຫຍັງການມາໂຮງຮຽນໃຫ້ທັນເວລາ ຈຶ່ງເປັນສິ່ງສຳຄັນ?

ການມາໂຮງຮຽນແລະເຂົ້າຫ້ອງຮຽນໃຫ້ທັນເວລາ:

- ເພື່ອໃຫ້ແນ່ໃຈວ່າລູກທ່ານບໍ່ພາດໃນຕາຕະລາງກິຈກັມການ ຮຽນອັນສຳຄັນໃນຕອນຕົ້ນໆຂອງມື້ໃນເວລາທີ່ພວກເຂົາມີຄວາມຕື່ນຕົວວ່ອງໄວທີ່ສຸດ
- ຊ່ວຍລູກທ່ານໃຫ້ຮຽນຮູ້ເຖິງຄວາມສຳຄັນຂອງການຕົງຕໍ່ ເວລາແລະຄວາມເປັນລະບຽບ
- ໃຫ້ລູກທ່ານມີເວລາທັກທ້ອງຖາມສະບາຍໝູ່ເພື່ອນກ່ອນ ເຂົ້າຫ້ອງຮຽນ ເພາະສັ້ນຈຶ່ງ
- ຫຼຸດຜ່ອນໂອກາດໃນການຣົບກວນຫ້ອງຮຽນ

ການມາຊ້າຈະຖືກບັນທຶກວ່າເປັນການຂາດ ບາງພາກສ່ວນ ແລະ ຕ້ອງຖືກອະທິບາຍໃຫ້ທາງໂຮງຮຽນຊາບເຊັ່ນດຽວກັນກັບການຂາດແບບອື່ນໆ.

## ຂ້າພະເຈົ້າຄວນເຮັດຢ່າງໃດຖ້າຫາກ ຄອບຄົວພວກເຮົາຈະໄປ ພັກຜ່ອນໃນ ລະຍະໂຮງຮຽນເຂົ້າຢູ່?

ບັນດາພໍ່ແມ່ ແລະ ຜູ້ປົກຄອງໄດ້ຖືກຊຸກຍູ້ບໍ່ໃຫ້ເອົາລູກໆຂອງພວກເຂົາອອກຈາກໂຮງຮຽນເພື່ອໄປພັກຜ່ອນກັບຄອບຄົວ. ບັນດາຄອບຄົວທັງຫຼາຍກໍຄວນພະຍາຍາມຈັດວາງການພັກຜ່ອນໃນລະຍະທີ່ໂຮງຮຽນປຸດພັກ.

ຖ້າຄອບຄົວຂອງທ່ານຈະໄປພັກຜ່ອນໃນລະຍະໂຮງຮຽນເຂົ້າຢູ່ ຈົ່ງແຈ້ງໃຫ້ທ່ານຄູໃຫຍ່ຂອງໂຮງຮຽນໃຫ້ຊາບລ່ວງໜ້າ ແລະ ຂໍພັກ ຫຼື ຂໍຍົກເວັ້ນຈາກໂຮງຮຽນ.

ຂຶ້ນຢູ່ກັບສະຖານະການແລະການຂໍພັກວ່າຈະຂໍດົນປານໃດ, ທ່ານສາມາດຂໍໃຫ້ທາງໂຮງຮຽນຈັດວຽກທີ່ລູກທ່ານສາມາດເຮັດໃຫ້ແລ້ວໃນລະຍະທີ່ລູກທ່ານຂາດໂຮງຮຽນ.

## ລູກຂ້າພະເຈົ້າຕ້ອງເຂົ້າຮ່ວມທຸກໆກິຈກັມ ຮວມທັງການອອກກຳລັງກາຍແລະກິລາ ບໍ?

**ແມ່ນແລ້ວ.** ກິລາ ແລະ ກິຈກັມທາງຮ່າງກາຍອື່ນໆຊ່ວຍລູກທ່ານໃຫ້ມີສຸຂພາບດີ. ບັນດາເດັກໆໄດ້ຖືກຄາດຫວັງໄວ້ວ່າໃຫ້ ເຂົ້າຮ່ວມກິຈກັມປົກກະຕິຂອງໂຮງຮຽນທຸກໆຢ່າງ ຮວມທັງ ກິລາ.

## ຢ່າໃຫ້ລູກທ່ານຂາດໂຮງຮຽນຍ້ອນສິ່ງຕໍ່ລົງໄປນີ້:

- ວັນເກີດ
- ໄປຊ້ອບປິງ
- ເບິ່ງແຍງເດັກນ້ອຍອື່ນໆ
- ການກວດຮ່າງກາຍທົ່ວໆໄປຫຼືວຽກປະຈຳເລັກນ້ອຍເຊັ່ນການຕັດຜົມ
- ການສລອງເລັກນ້ອຍຂອງຄອບຄົວ
- ນອນຕື່ນສວາຍ

ການນັດໝາຍໝໍ ຫຼື ກວດສຸຂພາບອື່ນໆສຳລັບລູກທ່ານກໍຄວນເຮັດກ່ອນຫຼືຫຼັງໂຮງຮຽນ ຫຼື ໃນລະຍະເວລາໂຮງຮຽນພັກ.

## ຂ້າພະເຈົ້າຄວນເຮັດຢ່າງໃດ ຖ້າລູກຂ້າພະເຈົ້າຕ້ອງຂາດໂຮງຮຽນ?

ຖ້າລູກທ່ານຕ້ອງຂາດໂຮງຮຽນ ມັນເປັນສິ່ງສຳຄັນທີ່ຕ້ອງແຈ້ງທາງໂຮງຮຽນ ແລະ ໃຫ້ເຫດຜົນທີ່ລູກ

ທ່ານຂາດໂຮງຮຽນນຳ. ເພື່ອຈະອະທິບາຍການຂາດໂຮງຮຽນ ບັນດາພໍ່ແມ່ ແລະ ຜູ້ປົກຄອງສາມາດ:

- ສົ່ງຈົດໝາຍສັ້ນໆ , ແຟັກຊ໌ ຫຼື ອີເມລ໌ ໄປຫາໂຮງຮຽນ
- ໂທຣະສັບຫາໂຮງຮຽນ
- ໄປຫາໂຮງຮຽນ

ການຂາດໂຮງຮຽນທຸກໆຄັ້ງຕ້ອງໄດ້ຖືກອະທິບາຍໃຫ້ທາງໂຮງຮຽນຊາບ. ຈົດໝາຍຜູ້ຂາດໂຮງຮຽນເປັນສອງພາສາ ແລະ ຂໍ້ມູນເພີ້ມຕື່ມກ່ຽວກັບການເຂົ້າໂຮງຮຽນສາມາດຊອກຫາໄດ້ຕາມເວັບໄຊຕ໌ຂອງທາງກະຊວງພາຍໃຕ້ຫົວຂໍ້ School Attendance (ການເຂົ້າໂຮງຮຽນ) ທີ່

https://www.det.nsw.edu.au/languagesupport/documents/index_s.htm

ທ່ານຄູໃຫຍ່ຂອງໂຮງຮຽນມີສິດທີ່ຈະສອບຖາມຄຳຮ້ອງຂໍຂອງພໍ່ແມ່ ຫຼື ຜູ້ປົກຄອງທີ່ຂໍໃຫ້ລູກຂອງຕົນຂາດໂຮງຮຽນ.

ນອກຈາກນີ້ ທ່ານຄູໃຫຍ່ຍັງມີສິດທີ່ຈະສອບຖາມຄຳອະທິບາຍກ່ຽວກັບການຂາດໂຮງຮຽນຂອງເດັກທີ່ທາງພໍ່ແມ່ໄດ້ເອົາໃຫ້.

## ລູກຂ້າພະເຈົ້າຈະບໍ່ໄປໂຮງຮຽນ. ຂ້າພະເຈົ້າຄວນເຮັດຢ່າງໃດ?

ທ່ານຄວນຕິດຕໍ່ທ່ານຄູໃຫຍ່ໃຫ້ໄວທີ່ສຸດເທົ່າທີ່ໄວໄດ້ເພື່ອປຶກສາຫາລືບັນຫານີ້ແລະເພື່ອຂໍຄວາມຊ່ວຍເຫຼືອ. ທ່ານຄູໃຫຍ່ອາດຈະຊອກຫາການອູ້ມຊູຈາກເຈົ້າໜ້າທີ່ພົວພັນລະຫວ່າງເຮືອນແລະໂຮງຮຽນ ຫຼື ເຈົ້າໜ້າທີ່ພົວພັນກັບນັກຮຽນອາບໍຣິຈິໂນລ.

## ເຈົ້າໜ້າທີ່ພົວພັນລະຫວ່າງເຮືອນ ແລະໂຮງຮຽນ ແລະເຈົ້າໜ້າທີ່ພົວພັນກັບ ນັກຮຽນອາບໍຣິຈິໂນລ ແມ່ນໃຜ?

ເຈົ້າໜ້າທີ່ພົວພັນລະຫວ່າງເຮືອນແລະໂຮງຮຽນ ແລະ ເຈົ້າໜ້າທີ່ພົວພັນກັບນັກຮຽນອາບໍຣິຈິໂນລ ເປັນຜູ້ທີ່ໄດ້ຜ່ານການຝຶກຫັດພິເສດເພື່ອຊ່ວຍທ່ານກ່ຽວກັບການເຂົ້າໂຮງຮຽນຂອງລູກທ່ານ.

ພວກເຂົາຈະເຮັດວຽກກັບຊຸມຊົນຂອງໂຮງຮຽນເພື່ອຊຸກຍູ້ໃຫ້ນັກຮຽນທຸກໆຄົນມາໂຮງຮຽນສມ່ຳສເມີ.

ເພື່ອເອົາຂໍ້ມູນເພີ້ມຕື່ມກ່ຽວກັບໂຄງການການພົວພັນລະຫວ່າງໂຮງຮຽນແລະຄອບຄົວ ທ່ານຄວນຕິດຕໍ່ຜູ້ຈັດການ ຂອງໂຄງການນີ້ຕາມຫ້ອງການເຂດຂອງ Department of Education and Training. ບັນດານຳເບີໂທຣະສັບສາມາດຊອກເອົາໄດ້ຈາກທີ່ຢູ່ເວັບໄຊຕ໌:

www.det.nsw.edu.au/contactus/index.htm ຫຼື ດ້ວຍການໂທຣະສັບຫາໝາຍເລກ 131 536.

## ທ່ານມີບັນຫາໃນການເຮັດໃຫ້ລູກໄປ ໂຮງຮຽນຍ້ອນເຫດຜົນ ບາງຢ່າງດັ່ງຕໍ່ ລົງໄປນີ້ບໍ່?

- ບໍ່ຢາກລຸກຈາກຕຽງ
- ບໍ່ຢາກເຂົ້ານອນ
- ຊອກຫາເຄື່ອງນຸ່ງ, ປຶ້ມ, ການບ້ານ, ກະເປົາໂຮງຮຽນ.. ບໍ່ເຫັນ
- ອາຫານທ່ຽງສຳລັບໂຮງຮຽນບໍ່ທັນແລ້ວ
- ກິນອາຫານເຊົ້າຊ້າ
- ເຮັດການບ້ານບໍ່ແລ້ວ
- ເບິ່ງໂທຣະທັດເດິກໃນຕອນກາງຄືນ ຫຼື ໃນເວລາທີ່ພວກເຂົາ ຄວນກຽມຕົວໄປໂຮງຮຽນ
- ການສອບເສັງ ຫຼື ການສະ ແດງຢູ່ໂຮງຮຽນ
- ວັນເກີດ
- ຮ້ອງສຽງດັງແລະບໍ່ຍອມປ່ອຍມືຈາກທ່ານ

## ອັນນີ້ແມ່ນຄຳແນະນຳ ບາງຢ່າງທີ່ອີງຕາມການວາງລະບຽບ ອັນສມ່ຳສເມີ:

- ຈັດຕັ້ງເວລາໃຫ້ລຸກອອກຈາກຕຽງ
- ຈັດຕັ້ງເວລາໃຫ້ເຂົ້າໄປນອນ
- ຈັດກຽມເຄື່ອງແບບນັກຮຽນແລະກະເປົາໂຮງຮຽນໄວ້ ແຕ່ກາງຄືນ
- ກຽມອາຫານທ່ຽງໄວ້ແຕ່ກາງຄືນ
- ຈັດຕັ້ງເວລາສຳລັບການເລີ້ມກິນອາຫານເຊົ້າແລະເວລາກິນໃຫ້ແລ້ວ. ການມີລະບຽບເປັນສິ່ງສຳຄັນ.
- ຈັດຕັ້ງເວລາສຳລັບການເຮັດການບ້ານປະຈຳວັນ
- ເປີດໂທຣະທັດໃຫ້ເປັນເວລາແລະຖ້າມີຄວາມເໝາະສົມ ເທົ່ານັ້ນ
- ໃຫ້ວາງລະບຽບເຄັ່ງຄັດ, ບັນດາເດັກນ້ອຍຕ້ອງໄປໂຮງຮຽນ
- ຈົ່ງໃຫ້ການສນັບສນູນທີ່ດີໃຫ້ຫຼາຍໆ
- ໃຫ້ວາງລະບຽບເຄັ່ງຄັດ, ງານວັນເກີດບໍ່ແມ່ນການພັກຜ່ອນ
- ຈົ່ງກະເວລາມາຮອດໂຮງຮຽນໃຫ້ພ້ອມໆກັບເວລາຕີລະຄັງ ເຂົ້າໂຮງຮຽນ ແລະ ກັບອອກເມືອໃຫ້ໄວໆ. ຖ້າຫາກຕົກລົງ ກັບນາຍຄູລ່ວງໜ້າ, ເອົາມືລູກທ່ານໃສ່ມືນາຍຄູແລ້ວທ່ານກໍ ອອກເມືອທັນທີ.

## ທ່ານຕ້ອງການນາຍພາສາບໍ?

ການບໍຣິການນາຍພາສາກໍອາດມີໄວ້ໃຫ້ສຳລັບບັນດາພໍ່ແມ່ ແລະ ຜູ້ປົກຄອງທີ່ບໍ່ປາກ ຫຼື ບໍ່ເຂົ້າໃຈພາສາອັງກິດໄດ້ດີ ແລະ ສຳລັບບັນດາພໍ່ແມ່ແລະຜູ້ປົກຄອງທີ່ຫູໜວກທີ່ໃຊ້ ພາສາໃບ້. ເພື່ອ ເອົາຂໍ້ມູນເພີ້ມຕື່ມກ່ຽວກັບການບໍຣິການນາຍພາສານີ້ ຈົ່ງຕິດຕໍ່ໂຮງຮຽນຂອງທ່ານ ຫຼື ໂທຣະສັບຫາ ບໍຣິການ ນາຍພາສາທາງໂທຣະສັບ ແລ້ວຂໍໃຫ້ພວກເຂົາຕິດຕໍ່ໂຮງຮຽນ ໃຫ້. ເບີໂທຣະສັບທີ່ຕ້ອງໂທ ແມ່ນໝາຍເລກ 131 450. ຂໍເອົານາຍພາສາໃນພາສາທີ່ທ່ານຕ້ອງການ ແລ້ວ ນາຍພາສາຈະໂທຫາໂຮງຮຽນ ແລະ ຈະຢູ່ກັບສາຍນັ້ນເພື່ອຊ່ວຍໃນການໂອ້ລົມຂອງທ່ານ. ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.

© March 2010
Student Welfare Directorate
NSW Department of Education & Training